

# ຕົວເລືອກການຄຸ້ມຄອງສຳລັບຜູ້ສູງອາຍຸ ແລະ ຄົນພິການ

Apple Health (Medicaid) ສະເໜີການຄຸ້ມຄອງສຳລັບຄົນທີ່ມີອາຍຸ 65 ປີຂຶ້ນໄປ, ຕາບອດ ຫຼື ພິການ ຫຼື ຕ້ອງການການບໍລິການ ແລະ ການຊ່ວຍເຫຼືອໄລຍະຍາວ (LTSS).

## ຄົນທີ່ສູງອາຍຸ, ຕາບອດ ຫຼື ພິການ (ABD)

ຖ້າທ່ານອາຍຸ 65 ປີຂຶ້ນໄປ, ຕາບອດ ຫຼື ພິການ ແລະ ເຂົ້າເກນລາຍໄດ້ ແລະ ຊັບພະຍາກອນ, Washington Apple Health (Medicaid) ອາດໃຫ້ການຄຸ້ມຄອງດູແລເບິ່ງແຍງສຸຂະພາບ ແລະ ຊ່ວຍຈ່າຍສຳລັບເບ້ຍປະກັນ Medicare ແລະ ຄ່າໃຊ້ຈ່າຍທາງການແພດ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບຕົວເລືອກການຄຸ້ມຄອງ, ລວມເຖິງບ້ານພັກຮັບຮອງ, ກະລຸນາເຂົ້າເບິ່ງ **hca.wa.gov/free-or-low-cost-health-care/i-need-medical-dental-or-vision-care/long-term-care-and-hospice**.

## ການສະໝັກຂໍການຄຸ້ມຄອງ ABD

- **ອອນລາຍ:** ເຂົ້າເບິ່ງ **washingtonconnection.org.**
- **ການສະໝັກຜ່ານເຈ້ຍ:** ປຣິນແບບຟອມ 18-005, ມີໃຫ້ທີ່ **hca.wa.gov/classic-health-care-application**
  - **ໄປສະນີ:** DSHS Community Services Division, P.O. Box 11699, Tacoma, WA 98411-6699.
- **ສ່ວນຕົວ:** ໄປທີ່ສຳນັກງານບໍລິການຊຸມຊົນທີ່ຢູ່ໃກ້ກັບທ່ານ. ເຂົ້າເບິ່ງ **dshs.wa.gov/office-locations**.
- ສຳລັບຄຳຖາມຕ່າງໆ, ກະລຸນາໂທຫາຝ່າຍບໍລິການລູກຄ້າ DSHS ທີ່ໝາຍເລກ 1-877-501-2233.

## ການບໍລິການ ແລະ ການຊ່ວຍເຫຼືອໄລຍະຍາວ (LTSS)

Apple Health ຈະຈ່າຍເງິນສຳລັບການບໍລິການໃນເຮືອນຂອງທ່ານ, ສະຖານທີ່ພັກເພື່ອດູແລເບິ່ງແຍງໃນຊຸມຊົນ, ສະຖານບໍລິການຢູ່ອາໄສໂດຍມີການຊ່ວຍເຫຼືອ, ເຮືອນຄອບຄົວທີ່ເປັນຜູ້ໃຫຍ່ ຫຼື ສະຖານບໍລິການພະຍາບານ ຖ້າທ່ານເຂົ້າເກນເງື່ອນໄຂໃດໜຶ່ງອີງໃສ່ການປະເມີນ.

ການຊ່ວຍເຫຼືອທີ່ປັບໃຫ້ແທດເໝາະກັບຜູ້ໃຫຍ່ສູງອາຍຸ (TSOA) ແລະ ທາງເລືອກການດູແລເບິ່ງແຍງ Medicaid (MAC) ແມ່ນໂຄງການ LTSS ທີ່ຊ່ວຍເຫຼືອຜູ້ດູແລເບິ່ງແຍງທີ່ກຳລັງດູແລໝູ່ ຫຼື ສະມາຊິກຄອບຄົວໃນປັດຈຸບັນ ໂດຍບໍ່ເສຍຄ່າ.

## ການສະໝັກຂໍ LTSS

- **ອອນລາຍ:** ເຂົ້າເບິ່ງ **washingtonconnection.org**.
- **ການສະໝັກຜ່ານເຈ້ຍ:** ປຣິນແບບຟອມ 18-005, ມີໃຫ້ທີ່ **hca.wa.gov/classic-health-care-application**
- **ສ່ວນຕົວ:** ໄປທີ່ສຳນັກງານບໍລິການເຮືອນ ແລະ ຊຸມຊົນທີ່ຢູ່ໃກ້ກັບທ່ານ. ເຂົ້າເບິ່ງ **dshs.wa.gov/office-locations**.
- ສຳລັບຄຳຖາມຕ່າງໆ, ກະລຸນາໂທຫາສຳນັກງານບໍລິການເຮືອນ ແລະ ຊຸມຊົນໃນທ້ອງຖິ່ນຂອງທ່ານ. ເຂົ້າເບິ່ງ **dshs.wa.gov/office-locations**.

**ໝາຍເຫດ:** ເກນລາຍໄດ້ ແລະ ຊັບພະຍາກອນແມ່ນມີຜົນສຳລັບໂຄງການເຫຼົ່ານີ້.

Washington Apple Health

Washington State Health Care Authority

## ຄວາມພິການດ້ານການປາກເວົ້າ ຫຼື ການໄດ້ຍິນ ຫຼື ບັນຫາການເຄື່ອນທີ່

ຖ້າທ່ານມີຄວາມພິການດ້ານການປາກເວົ້າ ຫຼື ການໄດ້ຍິນ ຫຼື ບັນຫາການເຄື່ອນທີ່, ທ່ານຄວນແຈ້ງໃຫ້ພະນັກງານຕ້ອນຮັບຮັບຊາບ ເມື່ອທ່ານດຳເນີນການນັດໝາຍ. ພະນັກງານຕ້ອນຮັບຂອງຜູ້ໃຫ້ບໍລິການດູແລເບິ່ງແຍງສຸຂະພາບຂອງທ່ານຈະຊ່ວຍໃຫ້ທ່ານດຳເນີນການຈັດແຈງໃດໜຶ່ງທີ່ຈຳເປັນ.

## ການບໍລິການລ່າມແປພາສາ

ຖ້າທ່ານບໍ່ສາມາດປາກເວົ້າພາສາອັງກິດໄດ້ດີ ຫຼື ທ່ານຫູໜວກ, ຫູໜວກ ແລະ ຕາບອດ ຫຼື ມີຄວາມຍາກລຳບາກໃນການໄດ້ຍິນ, ລ່າມແປພາສາວິຊາຊີບແມ່ນພ້ອມໃຫ້ບໍລິການໃນຫຼາຍພາສາ, ລວມເຖິງພາສາມື ໂດຍທີ່ທ່ານບໍ່ຕ້ອງເສຍຄ່າ. ແຈ້ງໃຫ້ພະນັກງານຕ້ອນຮັບຮັບຊາບວ່າທ່ານຕ້ອງການລ່າມແປພາສາ ເມື່ອທ່ານດຳເນີນການນັດໝາຍຂອງທ່ານ. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເຂົ້າເບິ່ງ **hca.wa.gov/interpreter-services**.

## ການບໍລິການເດີນທາງ

ທ່ານອາດມີສິດສຳລັບການຊ່ວຍເຫຼືອໃນການເດີນທາງໄປຕາມການນັດໝາຍເພື່ອດູແລເບິ່ງແຍງສຸຂະພາບຂອງທ່ານ ໂດຍທີ່ທ່ານບໍ່ຕ້ອງເສຍຄ່າ. ການນັດໝາຍຕ້ອງດຳເນີນການສຳລັບການບໍລິການທີ່ຢູ່ໃນການຄຸ້ມຄອງຂອງ Apple Health. ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອເພື່ອຊອກຫາການເດີນທາງ ຫຼື ທ່ານໝໍໃນພື້ນທີ່ຂອງທ່ານ, ກະລຸນາໂທຫາ 1-800-562-3022. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເຂົ້າເບິ່ງ **hca.wa.gov/transportation-help**.

HCA ປະຕິບັດຕາມກົດໝາຍສິດທິພົນລະເມືອງທັງໝົດຂອງລັດຖະບານກາງ ແລະ ລັດວໍຊິງຕັນທີ່ມີຜົນບັງຄັບໃຊ້ ແລະ ມຸ່ງໝັ້ນທີ່ຈະໃຫ້ການເຂົ້າເຖິງການບໍລິການຂອງພວກເຮົາຢ່າງເທົ່າທຽມ. ຖ້າທ່ານຕ້ອງການສິ່ງອຳນວຍຄວາມສະດວກ ຫຼື ຕ້ອງການເອກະສານເປັນຮູບແບບ ຫຼື ພາສາອື່ນ, ກະລຸນາໂທຫາ 1-800-562-3022 (TRS: 711).

